# Course: Environmental Economics

# Week 5

## Society's choice to protect the environment



**Phavone Keodouangkham**

**Souphanouvong University**

*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ບົດທີ 5
# ທາງເລືອກຂອງສັງຄົມໃນການປົກປ້ອງສິ່ງແວດລ້ອມ

## ເນື້ອໃນ

- ທາງເລືອກຂອງສັງຄົມໃນການປົກປ້ອງສິ່ງແວດລ້ອມ
- ການພິຈາລະນາທາງເລືອກຂອງສັງຄົມຈາກມູນຄ່າຂອງປັດໄຈເອກະຊົນ
- ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# Review

ຄວາມມີປະສິດທິພາບ

ຄວາມມີປະສິດທິພາບ ແລະ ຕະຫຼາດແຂ່ງຂັນ

ຄວາມມີປະສິດທິພາບທາງເສດຖະສາດຕາມພາເຣໂຕ

## I. ທາງເລືອກຂອງສັງຄົມໃນການປົກປ້ອງສິ່ງແວດລ້ອມ

ຫລັກຈະລິຍະສາດທາງດ້ານສິ່ງແວດລ້ອມ (Environment Ethics) ເຊິ່ງພິຈາລະນາວ່າຄວາມຖືກຕ້ອງໃນການປົກປ້ອງສິ່ງແວດລ້ອມຄືແນວໃດ ຫລື ຄວນເປັນແນວໃດມີຢູ່ຫລາຍແນວຄິດ ປລີຊາ ແລະ Kolstd ດັ່ງຕໍ່ໄປນີ້

**ແນວຄິດສິ່ງມີຊີວິດເປັນສູນກາງ (Biocentrism )**

**ແນວຄິດຄວາມຍັ້ງຍືນ ( Sustainability )**

**ແນວຄິດມະນຸດເປັນສູນກາງ (Anthropocentrism)**

# ແນວຄິດສິ່ງມີຊີວິດເປັນສູນກາງ (Biocentrism )

ແນວຄິດປັດສະຍາວ່າດ້ວຍສິ່ງມີຊີວິດເປັນສູນກາງນີ້ ໄດ້ສະຫຼຸບວ່າ **ສິ່ງມີຊີວິດທຸກຊະນິດມີຄຸນຄ່າໃນຕົວເອງບໍ່ຄຳນຶງວ່າຈະກໍ່ໃຫ້ເກີດປະໂຫຍດຕໍ່ມະນຸດ ຫຼື ບໍ່** ເຊິ່ງແນວຄິດນີ້ໄດ້ແຍກຄວາມແຕກຕ່າງລະຫວ່າງຄຸນຄ່າທີ່ເປັນປະໂຫຍດ (Instrumental Value) ແລະ ຄຸນຄ່າແທ້ຈິງ (Intrinsic Value)

ໂດຍຄຸນຄ່າທີ່ເປັນປະໂຫຍດເປັນຄຸນຄ່າທີ່ກ່ຽວຂ້ອງກັບການກໍ່ໃຫ້ເກີດປະໂຫຍດກັບມະນຸດໃນຂະນະທີ່ຄຸນຄ່າແທ້ຈິງເປັນຄຸນຄ່າຕາມທຳມະຊາດເຊິ່ງບໍ່ໄດ້ກ່ຽວຂ້ອງກັບການກໍ່ໃຫ້ເກີດປະໂຫຍດໂດຍສິ່ງມີຊີວິດບາງປະເພດບໍ່ມີປະໂຫຍດແຕ່ມີຄຸນຄ່າໃນຕົວເອງ



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ຕົວຢ່າງ

ໄວຣັດທີ່ເຮັດໃຫ້ເກີດໂລກບາດຖ້າພິຈາລະນາຄຸນຄ່າທີ່ເປັນ ປະໂຫຍດແລ້ວໄວຣັດຈະບໍ່ມີປະໂຫຍດຕໍ່ມະນຸດ ຫຼື ສິ່ງມີຊີວິດອື່ນໆ ແຕ່ໄວຣັດເປັນສິ່ງມີຊີວິດເຊິ່ງຕາມຫຼັກຈະລິຍະທາ◌ໍ ແລ້ວຍ່ອມມີຄຸນຄ່າໃນຕົວເອງ ເປັນຕົ້ນ



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ແນວຄິດຄວາມຢັ້ງຢືນ ( Sustainability )

ແນວຄິດເລື່ອງຄວາມຢັ້ງຢືນໄດ້ຖືກນຳມາພິຈາລະນາ ຄວາມສຳພັນລະຫວ່າງມະນຸດກັບສິ່ງແວດລ້ອມໂດຍ ສະເພາະແມ່ນໃນການປະຊຸມຂອງ ຄະນະກຳມະການ Brundtland ຄະນະກຳມະການໂລກກ່ຽວກັບ ສິ່ງແວດລ້ອມແລະການພັດທະນາໃນປີ ຄ ສ 1994



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ແນວຄິດຄວາມຍັ້ງຍືນ ( Sustainability )

ໄດ້ນິຍາມຄວາມຍັ້ງຍືນວ່າ "...ເປັນການພັດທະນາທີ່ຕອບສະໜອງຄວາມຕ້ອງການຂອງຄົນໃນປັດຈຸບັນໂດຍບໍ່ມີການປະນິປະນອມກັບຄົນໃນລຸ່ນອານາຄົດທີ່ຈະສະໜອງຕອບຄວາມຕ້ອງການຂອງຄົນໃນອານາຄົດ..."ເຊິ່ງແນວຄວາມຄິດເລື່ອງຄວາມຍັ້ງຍືນໄດ້ເນັ້ນປະເດັນທີ່ສຳຄັນ 2 ປະເດັນຄື

1)ລະດັບທີ່ປັດໄຈທຶນທຳມະຊາດ (Natural Capital) ສາມາດທົດແທນໂດຍທຶນມະນຸດໄດ້

2)ຂໍ້ຜູກພັນທີ່ຄົນໃນຍຸກປັດຈຸບັນເປັນໜີ້ຄົນໃນລຸ້ນອານາຄົດ



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ແນວຄິດຄວາມຍັ້ງຍືນ ( Sustainability )

Robert Solow ນັກເສດຖະສາດລາງວັນໂນເບວໄດ້ກ່າວເຖິງຄວາມຍັ່ງຍືນເພື່ອເປັນການຢືນຢັນວ່າຄົນໃນລຸ້ນອານາຄົດຊັບສິນເທົ່າກັບຄົນໃນຍຸກປັດຈຸບັນ ເຊິ່ງຄວນເກີດຂຶ້ນຢ່າງຕໍ່ເນື່ອງຕະຫລອດເວລາໂດຍປະເດັ່ນສຳຄັນກໍ່ຄືປັດປັດໄຈທີ່ມະນຸດສ້າງຂຶ້ນ (ເຊັ່ນ ເຄື່ອງຈັກ ສິ່ງກໍ່ສ້າງເປັນຕົ້ນ)ລວມທັງຄວາມຮູ້ຄວາມສາມາດທົດແທນທຳມະຊາດຕໍ່ສິ່ງແວດລ້ອມ ຫລື ທຶນທາງທຳມະຊາດໄດ້ ຕົວຢ່າງເຊັ່ນການນຳຊັບພະຍາກອນພະລັງງານມາໃຊ້ມະນຸດຕ້ອງຫາວິທີທີ່ຈະໃຊ້ພະລັງງານໃຫ້ນ້ອຍລົງ ແລະ ສ້າງເຄື່ອງຈັກທີ່ຫຼຸດການໃຊ້ພະລັງງານ ຫລື ນຳພະລັງງານຈາກແຫຼ່ງອື່ນມາໃຊ້ເຊັ່ນ ແສງອາທິດ ເປັນຕົ້ນ.



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ແນວຄິດຄວາມຍັ້ງຢືນ ( Sustainability )



Page ນັກເສດຖະສາດຈາກມະຫາວິທະຍາໄລບຣາວໃນປະເທດສະຫະລັດອາເມລິກາໄດ້ຂະຫຍາຍເລື່ອງຄວາມຍັ້ງຢືນຄອບຄຸມເຖິງການຈັດການຊັບພະຍາກອນເຊື່ອມສະພາບລົງລວມເຖິງມົນລະພິດ ແລະ ບັນຫາຄວາມແອອັດ ໂດຍໃນເລື່ອງການຈັດການຊັບພະຍາກອນທີ່ເຊື່ອມສະພາບນັ້ນ Pageໄດ້ຮຽກຮ້ອງໃຫ້ຮັກສາລະດັບຂອງຊັບພະຍາກອນໃນພາບລວມໃຫ້ຄົງທີ່ຈາກຍຸກສະໄຫມໜຶ່ງສົ່ງຕໍ່ໄປຍຸກສະໄຫມອື່ນໆ ໃນອານາຄົດ ( ເຊັ່ນ ພະລັງງານ ປ່າໄມ້ ດິນ ເປັນຕົ້ນ ) ໃນເລື່ອງມົນລະພິດ Pageຊີ້ໃຫ້ເຫັນຄວາມຈຳເປັນໃນການຮັກສາສົມດຸນລະຫ່ວາງສະພາວະໃນແຕ່ລະຍຸກສະໄຫມກັບຂີດຄວາມສາມາດໃນການດູດຊັບຂອງເສຍສິ່ງແວດລ້ອມ ແລະ ການມີປະຊາກອນທີ່ຫຼາຍເກີນໄປເປັນສາເຫດໜຶ່ງທີ່ເຮັດໃຫ້ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເຊື່ອມສະພາບລົງ.

*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# ແນວຄິດມະນຸດເປັນສູນກາງ (Anthropocentrism)

ແນວຄິດນີ້ເນັ້ນການສ້າງຄວາມເພິ່ງພໍໃຈດ້ານວັດຖຸໃຫ້ແກ່ມະນຸດໂດຍແນວຄິດມະນຸດເປັນສູນກາງແຕກຕ່າງຈາກແນວຄິດ Utilitarianismກ່າວຄືແນວຄິດ Utilitarianism ຄຳນຶງເຖິງເລື່ອງສິ່ງແວດລ້ອມໂດຍຈະເນັ້ນຄວາມເພິ່ງພໍໃຈ ຫຼື ຄວາມສຸກຂອງມະນຸດທີ່ໄດ້ຮັບຈາກສິ່ງແວດລ້ອມບໍ່ວ່າຈະເປັນດ້ານວັດຖຸ ຫຼື ດ້ານຈິດວິນຍານ ຫຼື ບໍ່ວ່າຈະເປັນຄຸນຄ່າທີ່ແທ້ຈິງ ຫຼື ຄຸນຄ່າທີ່ກໍ່ໃຫ້ເກີດຜົນປະໂຫຍດແຕ່ແນວຄິດມະນຸດເປັນສູນກາງ **ເນັ້ນເລື່ອງຄຸນຄ່າຂອງສິ່ງແວດລ້ອມທີ່ກໍ່ໃຫ້ເກີດປະໂຫຍດກັບມະນຸດ**



*Resource of image :* Blue and Green Illustrated Environmental Sustainability Presentation - Presentation



# II ການພິຈາລະນາທາງເລືອກຂອງສັງຄົມຈາກມູນຄ່າຂອງປັດໄຈເອກະຊົນ

ໃນສ່ວນທີ່ຜ່ານມາໄດ້ພິຈາລະນາແນວຄິດທີ່ກ່ຽວຂ້ອງກັບສິ່ງແວດລ້ອມຕັ້ງແຕ່ແນວຄິດທີ່ເນັ້ນສິ່ງທີ່ມີຊີວິດເປັນສູນກາງແນວຄວາມຄິດຢັ້ງຢືນ ແລະ ແນວຄິດທີ່ມະນຸດເປັນສູນກາງ ເຊິ່ງຈາກແນວຄວາມຄິດຕ່າງໆ ດັ່ງກ່າວສາມາດນຳພິຈາລະນາຫາແນວທາງໃນການຕັດສິນໃຈຂອງສັງຄົມໃນເລື່ອງທີ່ກ່ຽວຂ້ອງກັບການປົກປ້ອງສິ່ງແວດລ້ອມ ໂດຍໃນສ່ວນທີ່ກ່າວເຖິງຕໍ່ໄປສະຫຼຸບຈາກ Kolstad

*Resource of image :* Blue and Green Illustrated Environmental Sustainability Presentation - Presentation

## 1 ຟັງຊັນອັດຖະປະໂຫຍດ

ສົມມຸດໃຫ້ປະຊາຊົນຈຳນວນ N ຄົນໃນສັງຄົມ (ໂດຍ i = 1,2,….,N) ກຳນົດໃຫ້ X= ($X_1$, $X_2$, ….$X_N$) ຄືສິນຄ້າປະກອບກັນ (Composite Goods) ເຊິ່ງເປັນການບໍລິໂພກຂອງປະຊາຊົນຄົນທີ 1,….,N ແລະ e ເປັນຄຸນນະພາບສິ່ງແວດລ້ອມທີ່ປະຊາຊົນທຸກຄົນປະເຊີນຄືກັນດັ່ງນັ້ນ, ຟັງຊັນອັດຖະປະໂຫຍດ (The Utility Function ) ຂອງຜູ້ບໍລິໂພກຄົນທີ 1 ຂຽນໄດ້ດັ່ງສົມຜົນ(5.1)

- $U_i = U_i\,[X\,(x_1,\ldots,x_2\,,\ \ldots X_N),\ e]$ (5,1)




ຮູບທີ 5.1 ເສັ້ນຄວາມພໍໃຈ ເທົ່າກັນໃນການບໍລິການສິນຄ້າ (X) ແລະ ຄຸນນະພາບສິ່ງແວດລ້ອມ(e)

ເມື່ອຜູ້ບໍລິໂພກເຮັດການຕັດສິນໃຈເພື່ອບໍລິໂພກ x ແລະ e ຜູ້ບໍລິໂພກຕ້ອງເລືອກລະດັບຄວາມພໍໃຈທີ່ຫຼາຍທີ່ສຸດໂດຍຖ້າຜູ້ບໍລິໂພກມີແນວຄິດວ່າສິ່ງມີຊີວິດເປັນສູນກາງແລ້ວຈະບໍ່ມີການທົດແທນ e ດ້ວຍ x ໄດ້ເລີຍ ໃນຂະນະທີ່ຜູ້ບໍລິໂພກເຊິ່ງມີແນວຄິດວ່າມະນຸດເປັນສູນກາງກໍ່ຈະບໍ່ມີການທົດແທນ x ດ້ວຍ e ໄດ້ເລີຍ ເຊິ່ງສະແດງດັ່ງຮູບທີ 5,1

# 2 ກົນໄກທາງເລືອກຂອງສັງຄົມ

ເມື່ອພິຈາລະນາທາງເລືອກຂອງປັດໄຈເອກະຊົນທີ່ມີຕໍ່ສິນຄ້າບໍລິການທີ່ກ່ຽວຂ້ອງກັບສິ່ງແວດລ້ອມແລ້ວຈຳເປັນຕ້ອງພິຈາລະນາຕໍ່ວ່າສັງຄົມຈະເລືອກບໍລິໂພກສິນຄ້າດັ່ງກ່າວແບບໃດ

ໃນການເລືອກຂອງສັງຄົມຕ້ອງພິຈາລະນາຄວາມມັກ ຫຼື ຄວາມເພິ່ງພໍໃຈຂອງສັງຄົມເມື່ອກຳນົດຄວາມເພິ່ງພໍໃຈຂອງປັດໄຈບຸກຄົນທີ່ມີຕໍ່ສິນຄ້າບໍລິໂພກໄວ້ແລ້ວດັ່ງນັ້ນ ການຊອກອັດຖະປະໂຫຍດ ຂອງສັງຄົມ ຫຼື ຟັງຊັນສະຫວັດດີການສັງຄົມ (Social Welfare :SWF)ຈະຊ່ວຍຕອບຄຳຖາມດັ່ງກ່າວໄດ້ໂດຍ SWFຈະບອກລະດັບຄວາມເພິ່ງພໍໃຈຂອງສັງຄົມ



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

## ໃນການພິຈາລະນາການຕັດສິນໃຈ ຂອງສັງຄົມມີຫຼາຍວິທີໄດ້ແກ່

1

ເກນພາເລໂຕ (pareto Criterion)

2

ການເພີ່ມສະຫວັດດີການທາງສັງຄົມ ( Potential Pareto Improvement: PPI)

3

ຫຼັກການຊົດເຊີຍ (The Compensation Principle)

4

ການອອກສຽງ (Voting)

# 3 ຟັງຊັນສະຫວັດດີການຂອງສັງຄົມ

ໃນລະດັບບຸກຄົນສາມາດໃຊ້ຟັງຊັນສະຫວັດດີການຜົນປະໂຫຍດແທນລຳດັບຄວາມມັກຂອງບຸກຄົນໄດ້ ເຊິ່ງໃນລະດັບສັງຄົມກໍໃຊ້ແນວຄິດໃນທຳນອງດຽວກັນ ໂດຍໃຊ້ໜ້າທີ່ຄວາມເພິ່ງພໍໃຈ ຫຼື ຜົນປະໂຫຍດຂອງສັງຄົມແທນທາງເລືອກຂອງສັງຄົມ ໂດຍຟັງຊັນຜົນປະໂຫຍດຂອງສັງຄົມວ່າເປັນຟັງຊັນສະຫວັດດີການຂອງສັງຄົມ (Social Welfare Function: SWF)



*Resource of image :* Blue and Green Illustrated Environmental Sustainability Presentation - Presentation

ໂດຍຟັງຊັນສະຫວັດດີການສັງຄົມອາດຢູ່ໃນຮູບຂອງຄວາມສຳພັນຕ່າງໆກັນເຊັ່ນ

$$W(U_1,...,U_N) = \sum_i \theta_i U_i \qquad \forall \theta_i \geq 0 \qquad (5.3.1)$$

$$W(U_1,...,U_N) = \sum_i U_i - \lambda \sum_i \left[ U_i - Min_i(U_i) \right] \qquad (5.3.2)$$

$$W(U_1,...,U_N) = Min_i (U_i) \qquad (5.3.3)$$

ໃນສົມຜົນທີ (5.3.1)ຄ່າ ($\Theta_i$) ເປັນຕົວຖ່ວງນ້ຳໜັກຄ່າຄວາມພໍໃຈຂອງຜູ້ບໍລິໂພກເຊິ່ງອາດຈະເທົ່າກັນ ຫຼື ແຕກຕ່າງກັນກໍ່ໄດ້ໃນລະຫວ່າງຜູ້ບໍລິໂພກ

ຟັງຊັນສະຫວັດດີການສັງຄົມເປັນຕົວແທນຄວາມມັກຂອງສັງຄົມກໍ ຈະສາມາດຫາເສັ້ນຄວາມພໍໃຈເທົ່າກັນຂອງສັງຄົມ (Social Indifference Curves) ໄດ້ເຊັ່ນດຽວກັນເສັ້ນຄວາມເພິ່ງພໍໃຈ ຂອງບຸກຄົນ ຮູບທີ 5.4

*Resource of image :* Blue and Green Illustrated Environmental Sustainability Presentation - Presentation




ຮູບທີ 5.4 ເສັ້ນຄວາມເພິ່ງພໍໃຈເທົ່າກັນຂອງສັງຄົມ

*Resource of image :* Blue and Green Illustrated Environmental Sustainability Presentation - Presentation

# 4. ທິດສະດີຄວາມເປັນໄປໄດ້ຂອງແອໂຣ່ວ (The Arrow's Impossibility Theorem)

Arrow ໄດ້ສະເໜີເງື່ອນໄຂ 6 ຂໍ້ທີ່ເຊື່ອວ່າຟັງຊັນສະຫວັດດີການສັງຄົມຈະຕ້ອງມີເພື່ອສະທ້ອນຄວາມເພິ່ງພໍໃຈຂອງບຸກຄົນໄດ້ເຊິ່ງປະກອບມີຄື:

1)ທາງເລືອກຂອງສັງຄົມຕ້ອງປຽບທຽບໄດ້(Completeness)

2)ທາງເລືອກຂອງສັງຄົມຕ້ອງບໍ່ມີຄວາມຂັດແຍ້ງກັບຄວາມເພິ່ງພໍໃຈຂອງບຸກຄົນເຊັ່ນວ່າຖ້າສະມາຊິກໃນເປັນເອກະພາບ (Unanimity)

# 4. ທິດສະດີຄວາມເປັນໄປໄດ້ຂອງແອໂຣ່ວ (The Arrow's Impossibility Theorem)

Arrow ໄດ້ສະເໜີເງື່ອນໄຂ 6 ຂໍ້ທີ່ເຊື່ອວ່າຟັງຊັນສະຫວັດດີການສັງຄົມຈະຕ້ອງມີເພື່ອສະທ້ອນຄວາມເພິ່ງພໍໃຈຂອງບຸກຄົນໄດ້ເຊິ່ງປະກອບມີຄື:

3)ທາງເລືອກຂອງສັງຄົມຕ້ອງບໍ່ຖືກພະເດັດການໂດຍບຸກຄົນໃດບຸກຄົນໜຶ່ງພາຍໃນ ຫຼື ພາຍນອກສັງຄົມ (No dictatorship)

4) ທາງເລືອກຂອງສັງຄົມຕ້ອງມີລັກສະນະຂອງການຖ່າຍທອດ (Transits) ເຊັ່ນວ່າຖ້າສັງຄົມມັກ X ຫລາຍກວ່າ Y ແລະ ມັກ Y ຫລາຍກວ່າ Z ສະແດງວ່າສັງຄົມຕ້ອງມັກ X ຫລາຍກວ່າ Z

# 4. ທິດສະດີຄວາມເປັນໄປໄດ້ຂອງແອໂຣ່ວ (The Arrow's Impossibility Theorem)

Arrow ໄດ້ສະເໜີເງື່ອນໄຂ 6 ຂໍ້ທີ່ເຊື່ອວ່າຟັງຊັນສະຫວັດດີການສັງຄົມຈະຕ້ອງມີ ເພື່ອສະທ້ອນຄວາມເພິ່ງພໍໃຈຂອງບຸກຄົນໄດ້ເຊິ່ງປະກອບມີຄື:

5) ທາງເລືອກຂອງສັງຄົມຕ້ອງເປັນອິດສະຫຼະຈາກທາງເລືອກທີ່ບໍ່ກ່ຽວຂ້ອງເຊັ່ນວ່າທາງເລືອກຂອງສັງຄົມລະຫວ່າງທາງເລືອກ X ແລະ Y ຂຶ້ນຢູ່ກັບວ່າບຸກຄົນຈັດລຳດັບ X ແລະ Y ແນວໃດໂດຍບໍ່ຄຳນຶງເຖິງທາງເລືອກອື່ນໆ

6) ຕາມລຳດັບທາງເລືອກຕ່າງໆຂອງງບຸກຄົນທີ່ເປັນໄປໄດ້(Universaty)

ແອໂຣ່ວສະແດງໃຫ້ເຫັນວ່າຟັງຊັນສະຫວັດດີການສັງຄົມບໍ່ສາມາດຫາໄດ້ໃນລະບົບປະຊາທິປະໄຕທີ່ໃຫ້ພົນລະເມືອງມີການອອກສຽງທາງການເມືອງ (Democratic Voting) ຖ້າບໍ່ມີການລະເມີດເງື່ອນໄຂໃດເງື່ອນໄຂ ໜຶ່ງໃນ 6 ຂໍ້ກ່າວມາແລ້ວຕົວຢ່າງເຊັ່ນເງື່ອນໄຂຂໍ້ທີ 5 ສົມມຸດທ້າວ A B C ຕ້ອງລຽງຕາມລໍາດັບທາງເລືອກ X Y Z ດັ່ງທີ່ສະແດງໃນຕາຕະລາງທີ 5.1ຈາກຕາຕະລາງເຫັນວ່າ



*Resource of image :* [Blue and Green Illustrated Environmental Sustainability Presentation - Presentation]

## ຕາຕະລາງທີ 5.1 ການກຳນົດລະດັບທາງເລືອກ (Ranking X Y ແລະ Z ໂດຍທ້າວ A B ແລະ C)

| | | ທາງເລືອກ | |
|---|---|---|---|
| | X | Y | Z |
| ທ້າວ A | 1 | 2 | 3 |
| ທ້າວ B | 3 | 1 | 2 |
| ທ້າວ C | 2 | 3 | 1 |

# ຂໍ້ວິພາກຂອງແນວຄວາມຄິດອັດຖະປະໂຫຍດ (Utilitarian)

ໃນສ່ວນທີ່ແລ້ວມີຂໍ້ສົມມຸດວ່າທາງເລືອກຂອງສັງຄົມພິຈາລະນາຈາກຟັງຊັນອັດຖະປະໂຫຍດຂອງບຸກຄົນ ແລະ ກົນໄກທາງເລືອກອື່ນໆຂອງສັງຄົມເຊັ່ນ: ຫຼັກສຽງສ່ວນຫລາຍ ຫຼື ເງື່ອນໄຂຫຼັກເກນຂອງພາເຣໂຕເປັນຕົ້ນເຊິ່ງຂໍ້ສະເໜີດັ່ງກ່າວຍັງມີຂໍ້ວິພາກອີກຢ່າງໜຶ່ງກໍ່ຄືຟັງຊັນອັດຖະປະໂຫຍດເປັນຕົວແທນຂອງຄວາມມັກ ຫລື ລະດັບຄວາມເພິ່ງພໍໃຈຂອງບຸກຄົນ ແລະ ບໍ່ມີການປ່ຽນແປ່ງເຊິ່ງໃນຄວາມເປັນຈິງແລ້ວປະຊາຊົນປ່ຽນແປງຄວາມຄິດເຫັນຕະຫລອດເວລາ ດັ່ງນັ້ນ ຖ້າສິ່ງແວດລ້ອມບໍ່ໄດ້ມີຄຸນຄ່າກັບປະຊາຊົນຫຼາຍຂະໜາດນີ້ການໃຫ້ຂໍ້ມູນ ແລະ ການໃຫ້ການສຶກສາແກ່ປະຊາຊົນຈະສາມາດຊ່ວຍໃຫ້ປະຊາຊົນເຫັນຄວາມສຳຄັນຂອງສິ່ງແວດລ້ອມເພີ່ມຂຶ້ນ.

# ຂໍ້ວິພາກຂອງແນວຄວາມຄິດອັດຖະປະໂຫຍດ (Utilitarian)

ນອກຈາກນີ້ຂໍ້ວິພາກອີກປະການຄືບໍ່ໃຊ້ປະຊາຊົນທີ່ໄດ້ຮັບຜົນກະທົບດ້ານສິ່ງແວດລ້ອມທຸກຄົນທີ່ຈະໄດ້ອອກສຽງຕົວຢ່າງເຊັ່ນ ຄົນທີ່ຍັງບໍ່ໄດ້ເກີດມາແຕ່ຕ້ອງໄດ້ຮັບຜົນກະທົບຈາກຄຸນນະພາບສິ່ງແວດລ້ອມໃນໄລຍະຍາວຫຼື ປະຊາຊົນທີ່ຍັງບໍ່ໄດ້ຍ້າຍເຂົ້າມາຢູ່ໃນເຂດນັ້ນໆກໍ່ຈະບໍ່ໄດ້ຮັບອານຸຍາດໃຫ້ອອກສຽງເຖິງແມ່ນວ່າໃນອະນາຄົດປະຊາຊົນຈະຍ້າຍມາຢູ່ໃນເຂດດັ່ງກ່າວ ແລະ ໄດ້ຮັບຜົນກະທົບຈາກສິ່ງແວດລ້ອມໃນເວລາຕໍ່ມາເປັນຕົ້ນ.

# ຂໍ້ວິພາກຂອງແນວຄວາມຄິດອັດຖະປະໂຫຍດ (Utilitarian)

ຂໍ້ວິພາກປະການທີ່ສາມກໍຄືນະໂຍບາຍສາທາລະນະຄວນອີງໃສ່ຄວາມເພິ່ງພໍໃຈຂອງບຸກຄົນຫລາຍກວ່າແນວຄິດເລື່ອງຂອງຄວາມຖືກຕ້ອງ ຫຼື ບໍເຊິ່ງ Sagoff ໄດ້ຊີ້ໃຫ້ເຫັນວ່າຄວາມປາຖະໜາສ່ວນບຸກຄົນຖືກຂົ່ມໄວ້ບໍ່ໃຫ້ສະແດງອອກໂດຍຄວາມເຊື່ອວ່າເປັນສິ່ງທີ່ຖືກຕ້ອງ ຫຼື ເປັນຄວາມຮູ້ສຶກວ່າເປັນພາລະໜ້າທີ່ທີ່ຕ້ອງເຮັດເພື່ອຜູ້ອື່ນ.

## III. ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ

ຜົນຂອງການແກ້ໄຂບັນຫາມີຄວາມແຕກຕ່າງກັນຂຶ້ນຢູ່ກັບນະໂຍບາຍ ຫຼື ຂະບວນການຂອງສັງຄົມທີ່ເລືອກມາໃຊ້ ຕົວຢ່າງເຊັ່ນການຫຼຸດມົນລະພິດທາງອາກາດຈະແກ້ໄຂໄດ້ຫຼາຍໜ້ອຍປານໃດຖ້າການຫຼຸດກໍ່ໃຫ້ເກີດຕົ້ນທຶນກັບຜູ້ກໍ່ມົນລະພິດ ແລະ ຂະນະດຽວກັນຜູ້ກໍ່ມົນລະພິດວະອາດຈະຜະລິດຕົ້ນທຶນດັ່ງກ່າວໃຫ້ກັບຜູ້ອື່ນໄດ້ Kolstad.

## III. ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ

ຖ້າໃຊ້ຫຼັກເກນພາເຣໂຕມາພິຈາລະນາຈະເຫັນໄດ້ວ່າເປັນໄປບໍ່ໄດ້ທີ່ຈະໃຫ້ປະຊາຊົນທັງໝົດໃນເມືອງທີ່ໄດ້ຮັບຜົນກະທົບຫັນມາສະໜັບສະໜູນນະໂຍບາຍການຄວບຄຸມມົນລະພິດ

## III. ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ

- ພາຍໃຕ້ຫຼັກສຽງສ່ວນຫຼາຍ (Majority Rule Voting) ຜົນທີ່ໄດ້ແມ່ນຂຶ້ນຢູ່ກັບອົງປະກອບຂອງປະຊາຊົນຖ້າປະຊາຊົນສ່ວນໃຫຍ່ເປັນຄົນຈົນຈະບໍ່ສະໜັບສະໜູນນະໂຍບາຍການຫຼຸດມົນລະພິດຖ້າຕ້ອງຈ່າຍເງິນຫລາຍຂຶ້ນສໍາລັບບໍລິການຕ່າງໆ

## III. ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ

- ຖ້າສຽງສ່ວນຫລາຍແບບເດັດຂາດ Supermajority ນໍາມາໃຊ້ໃນການຕັດສິນໃຈທາງສັງຄົມ(ໝາຍຄວາມວ່າເປັນສຽງສ່ວນຫລາຍເຊັ່ນ: 2ໃນ3 ເປັນຕົ້ນ) ການຄວບຄຸມມົນລະພິດໃນລະດັບປານກາງຈະເປັນໄປໄດ້ຫລາຍກວ່າໃນກໍລະນີສຽງສ່ວນຫລາຍ

## III. ຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມ

ດັ່ງນັ້ນ,ຈະເຫັນໄດ້ວ່າຜົນທີ່ເກີດຂຶ້ນໃນການຄວບຄຸມ ຫຼື ແກ້ໄຂບັນຫາມົນລະພິດເກີດຈາກລະດັບຄວາມເພິ່ງພໍໃຈທີ່ແຕກຕ່າງກັນຂອງປະຊາຊົນລວມເຖິງຂະບວນການທາງເລືອກຂອງສັງຄົມທີ່ແຕກຕ່າງກັນດ້ວຍ

# Home work

1. ຈົ່ງອະທິບາຍແນວຄິດກ່ຽວກັບ**ທາງເລືອກຂອງສັງຄົມໃນການປົກປ້ອງສິ່ງແວດລ້ອມ ມີຄື ແນວໃດ?**

2. **ໃນການພິຈາລະນາທາງເລືອກຂອງສັງຄົມຈາກມູນຄ່າຂອງປັດໄຈສ່ວນບຸກຄົນເພື່ອ**ໃນເລື່ອງທີ່ກ່ຽວຂ້ອງກັບການປົກປ້ອງສິ່ງແວດລ້ອມ ມີປັດໄຈໃດ່ແດ່? ຈົ່ງອະທິບາຍ

3. **ຈົ່ງອະທິບາຍຕົວຢ່າງການຕັດສິນໃຈແກ້ບັນຫາດ້ານສິ່ງແວດລ້ອມໂດຍໃຊ້ຂະບວນການທາງເລືອກຂອງສັງຄົມມີຄືແນວໃດ?**

# Reference

XIONGTOUA,T. et al., (2021). Environmental Economics. Souphanouvong University

# Thank you very much!



*Resource of image :* Blue and Green Illustrated Environmental Sustainability Presentation - Presentation